**ແຈ້ງການເປັນລາຍລັກອັກສອນກ່ຽວກັບສິດຂອງຜູ້ໄດ້ຮັບຜົນປະໂຫຍດສໍາລັບ TEFAP**

ຊື່ອົງກອນ: ______________________________________________

ຍ້ອນວ່າໂຄງການນີ້ໄດ້ຮັບການສະໜັບສະໜູນທັງໝົດ ຫຼື
ບາງສ່ວນໂດຍການຊ່ວຍເຫຼືອທາງດ້ານການເງິນຈາກລັດຖະບານກາງ, ສະນັ້ນ
ພວກເຮົາຈໍາເປັນຕ້ອງໄດ້ແຈ້ງໃຫ້ທ່ານຊາບວ່າ:

(1) ພວກເຮົາຈະບໍ່ມີການຈໍາແນກຕໍ່ທ່ານ ບົນພື້ນຖານສາດສະໜາ, ຄວາມເຊື່ອທາງສາດສະໜາ, ການປະຕິເສດທີ່ຈະຖືຄວາມເຊື່ອທາງສາດສະໜາ ຫຼື ການປະຕິເສດຈະເຂົ້າຮ່ວມ ຫຼື ມີສ່ວນຮ່ວມໃນພິທີກໍາທາງສາດສະໜາ;

(2) ພວກເຮົາອາດຈະບໍ່ຮຽກຮ້ອງໃຫ້ທ່ານຕ້ອງເຂົ້າຮ່ວມ ຫຼື ມີສ່ວນຮ່ວມໃນກິດຈະກໍາທາງສາດສະໜາຢ່າງໂຈ່ງແຈ້ງ (ລວມທັງກິດຈະກໍາທີ່ມີເນື້ອຫາທາງສາດສະໜາຢ່າງເປີດເຜີຍ ເຊັ່ນ: ການນະມັດສະການ, ການສິດສອນທາງສາດສະໜາ ຫຼື ການເຜີຍແຜ່ສາດສະໜາ) ທີ່ຈັດໃຫ້ໂດຍອົງກອນຂອງພວກເຮົາ ແລະ ການມີສ່ວນຮ່ວມໃດໆຂອງທ່ານໃນກິດຈະກໍາດັ່ງກ່າວຕ້ອງເປັນຄວາມສະໝັກຢ່າງສິ້ນເຊີງ;

(3) ພວກເຮົາຈໍາຕ້ອງແຍກເວລາ ຫຼື ສະ ຖານທີ່ສໍາລັບກິດຈະກໍາທາງສາດສະໜາທີ່ໂຈ່ງແຈ້ງທີ່ເອກະຊົນເປັນຜູ້ໃຫ້ທຶນ (ລວມທັງກິດຈະກໍາທີ່ມີເນື້ອຫາທາງສາດສະໜາຢ່າງເປີດເຜີຍ ເຊັ່ນ ການນະມັດສະການ, ການສິດສອນ ທາງສາດສະໜາ ຫຼື ການເຜີຍແຜ່ສາດສະໜາ) ຈາກກິດຈະກໍາທີ່ໄດ້ຮັບການສະໜັບສະໜູນດ້ວຍການ ຊ່ວຍເຫຼືອທາງການເງິນໂດຍກົງຈາກລັດຖະບານກາງ ແລະ

(4) ທ່ານສາມາດລາຍງານການລະເມີດມາດຕະການປົກປ້ອງເຫຼົ່ານີ້ໄດ້, ລວມທັງການປະຕິເສດການບໍລິການ ຫຼື ສິດທິປະໂຫຍດຂອງອົງກອນ, ໂດຍການຕິດຕໍ່ ຫຼື ຍື່ນຄໍາຮ້ອງທຸກເປັນລາຍລັກອັກສອນຕໍ່ສໍານັກງານຜູ້ຊ່ວຍເລຂາທິການດ້ານສິດທິພົນລະເຮືອນ, ສູນການບັງຄັບໃຊ້ສິດທິພົນລະເຮືອນ, ພະແນກການຮ້ອງຮຽນຕໍ່ໂຄງການ ຜ່ານທາງໄປສະນີ, ແຟັກ ຫຼື ອີເມວ ທີ່:

**ທາງໄປສະນີ:**
United States Department of Agriculture
Director, Center for Civil Rights Enforcement
1400 Independence Avenue, SW
Washington, DC 20250-9410

**ແຟັກ:** (202) 690-7442
**ອີເມວ:** program.intake@usda.gov

(5) ຖ້າທ່ານຕ້ອງການຊອກຫາຂໍ້ມູນວ່າມີອົງກອນອື່ນທີ່ໄດ້ຮັບທຶນຈາກລັດຖະບານກາງ ທີ່ໃຫ້ບໍລິການປະເພດເຫຼົ່ານີ້ຢູ່ໃນພື້ນທີ່ຂອງທ່ານ ຫຼື ບໍ່, ກະລຸນາຕິດຕໍ່ **ສາຍດ່ວນລາຍງານຄວາມອຶດຫິວຂອງ USDA**:

- ທາງໂທລະສັບ: 1-866-3-HUNGRY ຫຼື 1-877-8-HAMBRE ເພື່ອໂອ້ລົມກັບພະນັກງານບໍລິການ ຕັ້ງແຕ່ເວລາ 7:00 ໂມງເຊົ້າ ຫາ 10:00 ໂມງແລງ ຕາມເວລາຕາເວັນອອກ.
- ທາງຂໍ້ຄວາມ: 914-342-7744 ພ້ອມຄຳຖາມທີ່ອາດມີຄຳສັບສຳຄັນ ເຊັ່ນ “ອາຫານ," “ລະດູຮ້ອນ,” “ຄາບອາຫານ” ແລະ ອື່ນໆ ເພື່ອໃຫ້ໄດ້ຮັບການຕອບກັບໂດຍອັດຕະໂນມັດສຳລັບແຫຼ່ງຊັບພະຍາກອນທີ່ຢູ່ໃກ້ກັບທີ່ຢູ່ ແລະ/ຫຼື ລະຫັດໄປສະນີຂອງທ່ານ.

ແຈ້ງການເປັນລາຍລັກອັກສອນສະບັບນີ້ຕ້ອງໄດ້ມອບໃຫ້ແກ່ທ່ານ ກ່ອນທີ່ທ່ານຈະລົງທະບຽນເຂົ້າໃນໂຄງການ ຫຼື ຮັບການບໍລິການຈາກໂຄງການ, ເວັ້ນເສຍແຕ່ວ່າລັກສະນະຂອງການບໍລິການທີ່ໄດ້ສະໜອງໃຫ້ ຫຼື ມີສະຖານະການສຸກເສີນເຮັດໃຫ້ບໍ່ສາມາດໃຫ້ແຈ້ງການສະບັບດັ່ງກ່າວໄດ້ ກ່ອນທີ່ພວກເຮົາຈະໃຫ້ການບໍລິການຕົວຈິງ. ໃນກໍລະນີດັ່ງກ່າວ, ແຈ້ງການສະບັບນີ້ຕ້ອງໄດ້ມອບໃຫ້ແກ່ທ່ານໃຫ້ໄວທີ່ສຸດເທົ່າທີ່ມີໂອກາດ.